Lao - ພຣະຄຳພີຈິດໃຈທີ່ບໍ່ດີ - Bad Mind Scriptures

ປະຖົມການ 26:35 ຜູ້ຍິງທັງສອງນີ້ໄດ້ສ້າງຄວາມບໍ່ພໍໃຈໃຫ້ແກ່ອີຊາກ ແລະນາງເຣເບ ກາຫວາຍ

ພຣະບັນຍັດສອງ 28:65 ເມື່ອທ່ານຢູ່ຖ້າມກາງປະຊາຊາດຕ່າງໆນັ້ນ ທ່ານຈະບໍ່ພົບ ຄວາມສະບາຍເລີຍ ສົ້ນຕີນຂອງທ່ານຈະບໍ່ມີທີ່ຢຸດພັກ ເພາະພຣະຜູ້ເປັນເຈົ້າຈະປະ ທານໃຫ້ທ່ານມີຈິດໃຈທີ່ຫວາດຫວັ່ນ ມີຕາທີ່ມືດມົວ ແລະມີຊີວິດທີ່ຄ່ອຍສິ້ນຫວັງ ລົງ

ນາງຣູດ 1:18 ເມື່ອນາງນາໂອມີເຫັນນາງຣູດມີຄວາມຕັ້ງໃຈໄປກັບຕົນແທ້ ນາງກໍບໍ່ເວົ້າ ຫຍັງອີກ

2 ຊາມູເອນ 17:8 ພຣະອົງກໍຊົງຮູ້ຢູ່ແລ້ວວ່າ ກະສັດດາວິດສະເດັດພໍ່ຂອງພຣະອົງກັບ ພວກຂອງພຣະອົງນັ້ນເປັນນັກຮົບທີ່ເກັ່ງກ້າ ແລະໂຫດຮ້າຍເຫມືອນຫມີຢູ່ໃນປ່າທີ່ ຖືກຄົນລັກເອົາລູກຂອງມັນໄປ ສະເດັດພໍ່ຂອງພຣະອົງເປັນນັກຮົບທີ່ມີຄວາມຊຳນິຊຳ ນານ ເວລາກາງຄືນພຣະອົງຄົງຈະບໍ່ນອນຢູ່ບ່ອນດຽວກັບພວກທະຫານຂອງພຣະອົງ ດອກ

ສຸພາສິດ 21:27 ເຄື່ອງສັກການະບູຊາຂອງຄົນຊົ່ວຮ້າຍເປັນສິ່ງທີ່ຫນ້າກຽດຊັງ ເມື່ອເຂົາ ນຳມາດ້ວຍຄວາມຕັ້ງໃຈຊົ່ວຈະຍິ່ງກວ່ານັ້ນຈັກເທົ່າໃດ

ສຸພາສິດ 29:11 ຄົນໂງ່ຍ່ອມໃຫ້ຄວາມໂກດຂອງເຂົາພຸ່ງອອກມາເຕັມທີ່ ແຕ່ນັກປາດ ຍ່ອມຍັບຍັ້ງໂທສະໄວ້ງຽບໆ

ເອເຊກຽນ 23:17,22,28 ຊາວບາບີໂລນກໍມາຫານາງເຖິງຕຽງຮັກ ແລະເຂົາກໍກະທຳໃຫ້ ນາງເປັນມົນທິນດ້ວຍຣາຄະຂອງເຂົາ ຫລັງຈາກທີ່ນາງເບື້ອນເປີກັບເຂົາແລ້ວ ນາງກໍ ເບື່ອຫນ່າຍ 22 ເຫດສັນນັ້ນ ໂອໂຮລີບາເອີຍ, ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ “ເບິ່ງ

ແມ່, ເຮົາຈະໃຫ້ຄົນຮັກທີ່ເຈົ້າເບື່ອຫນ່າຍແລ້ວນັ້ນໃຫ້ມາສູ້ເຈົ້າ ແລະເຮົາຈະນຳເຂົາມາ
ສູ້ເຈົ້າຈາກທຸກດ້ານ 28 ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ່, ເຮົາຈະມອບ
ເຈົ້າໄວ້ໃນມືຂອງຜູ້ທີ່ເຈົ້າກຽດຊັງ ໃນມືຂອງຜູ້ເຫລົ່ານັ້ນທີ່ເຈົ້າເບື່ອຫນ່າຍ

ເອເຊກຽນ 36:5 ເຫດສັນນັ້ນພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ດ້ວຍຄວາມຫວງແຫນຢ່າງ
ເດືອດດານຂອງເຮົາ ເຮົາເວົ້າກ່າວໂທດປະຊາຊາດທີ່ເຫລືອຢູ່ ແລະແກ່ເອໂດມທັງສິ້ນ
ຜູ້ທີ່ມອບແຜ່ນດິນຂອງເຮົາໃຫ້ແກ່ຕົນເອງໃຫ້ເປັນກຳມະສິດ ດ້ວຍຄວາມລ່າເຮີງ
ຢ່າງເຕັມໃຈ ແລະຄວາມຫມິ່ນປມາດຢ່າງທີ່ສຸດ ເພື່ອເຂົາຈະໄດ້ໄລ່ຄົນແຜ່ນດິນນັ້ນ
ອອກໄປ ເພື່ອຈະໄດ້ປຸ້ນເອົາໄປເສັງ

ເອເຊກຽນ 38:10 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ໃນວັນນັ້ນ ຈະບັງເກີດຄວາມຄິດໃນໃຈ
ຂອງເຈົ້າ ແລະເຈົ້າຈະຄິດແຜນການຊົ່ວ

ດານີເອນ 5:20 ແຕ່ຍ້ອນພຣະອົງມີຄວາມທະເຍີທະຍານ ມີພຣະທັຍແຂງກະດ້າງແລະ
ກະທຳການຊົ່ວຮ້າຍ ພຣະອົງຈຶ່ງຖືກປົດອອກຈາກພຣະຣາຊບັນລັງແລະສູນເສັງກຽດ
ຕິຍົດ

ລູກາ 12:29 ໃຫ້ທ່ານທັງຫລາຍເຂົ້າໃຈຢ່າງນີ້ວ່າ ຖ້າເຈົ້າຂອງເຮືອນໄດ້ຮູ້ກ່ອນວ່າໂຈນຈະ
ມາໃນໂມງໃດ ຕົນຈະບໍ່ປະໃຫ້ໂຈນເຈາະເຂົ້າເຮືອນໄດ້

ກິຈການ 12:20 ອັນນຶ່ງເຮໂຣດມີຄວາມເຄືອງຄຽດຕໍ່ຊາວຕີເຣແລະຊາວຊີໂດນ ແຕ່
ຊາວເມືອງນັ້ນໄດ້ພ້ອມກັນມາເຝົ້າທ່ານ ເມື່ອເຂົາຕົດຕໍ່ເອົາໃຈ ລາຊະໂຕກົມມະວັງ
ຂອງກະສັດໄດ້ແລ້ວ ເຂົາກໍພາກັນໄປຂໍເປັນໄມຕຣີກັບກະສັດ ເພາະວ່າເມືອງຂອງເຂົາ
ຕ້ອງອາໄສອາຫານລ້ຽງຊີບຈາກແຜ່ນດິນຂອງກະສັດ

ກິຈການ 14:2 ແຕ່ພວກຢິວທີ່ບໍ່ຍອມເຊື່ອກໍໄດ້ຍົວະຍົງຄົນຕ່າງຊາດໃຫ້ຄຶດປອງຮ້າຍຕໍ່
ພວກພີ່ນ້ອງ

ໂຣມ 1:28 ເຂົາບໍ່ເຫັນດີທີ່ຈະຮັບຮູ້ພຣະເຈົ້າ ພຣະອົງຈຶ່ງຊົງປ່ອຍໃຫ້ເຂົາມີໃຈຊົ່ວແລະ
ເຮັດສິ່ງທີ່ບໍ່ສົມຄວນ

ໂຣມ 8:6,7 ດ້ວຍວ່າການໃສ່ໃຈຢູ່ກັບຝ່າຍມະນຸດນັ້ນກໍຄືຄວາມຕາຍ ແລະການໃສ່ໃຈ
ກັບຝ່າຍພຣະວິນຍານນັ້ນກໍຄືຊີວິດແລະສັນຕິສຸກ 7 ເຫດວ່າການທີ່ໃສ່ໃຈກັບຝ່າຍມະ
ນຸດນັ້ນກໍເປັນສັດຕຣູຕໍ່ພຣະເຈົ້າ ເພາະບໍ່ຍອມຢູ່ໃຕ້ບັງຄັບພຣະບັນຍັດຂອງພຣະເຈົ້າ
ແລະທີ່ຈິງ, ຈະຢູ່ໃຕ້ບັງຄັບພຣະບັນຍັດນັ້ນກໍບໍ່ໄດ້

ໂຣມ 11:20 ກໍຖືກແລ້ວທີ່ເຂົາຖືກຊົ່ງຫັກອອກກໍເພາະເຂົາບໍ່ເຊື່ອ ແຕ່ທີ່ເຈົ້າຢູ່ໄດ້ກໍເພາະ
ດ້ວຍຄວາມເຊື່ອຂອງເຈົ້າເທົ່ານັ້ນ ດັ່ງນັ້ນຢ່າສູ່ຈອງຫອງແຕ່ຈົ່ງເປັນຜູ້ຢຳເກງ

2 ໂກຣິນໂທ 10:5 ແລະຄວາມດື້ດຶງທຸກປະການທີ່ຕັ້ງຕົວຂຶ້ນຂັດຂວາງຄວາມຮູ້ຈັກພຣະ
ເຈົ້າ ແລະປາຍຄວາມຄິດທຸກປະການວົ່ງໃຫ້ຢູ່ໃຕ້ບັງຄັບ ຈົນເຖິງນ້ອມຟັງພຣະຄຣິດ

2 ໂກຣິນໂທ 11:3 ແຕ່ເຫມືອນດັ່ງງູນັ້ນໄດ້ຫລອກລວງນາງເອວາດ້ວຍກົນອຸບາຍຂອງ
ມັນ ເຮົາຄຶດຢ້ານວ່າຈິດໃຈຂອງເຈົ້າທັງຫລາຍກໍຈະຖືກຫລອກລວງດ້ວຍຢ່າງໃດ
ຢ່າງນຶ່ງ ໃຫ້ຫວົ່ງຈາກຄວາມຈົ່ງຮັກພັກດີອັນສັດຊື່ແລະອັນບໍຣິສຸດຕໍ່ພຣະຄຣິດດັ່ງ
ນັ້ນ

ເອເຟໂຊ 2:3 ເມື່ອກ່ອນ, ເຮົາທັງປວງເຄີຍດຳເນີນຊີວິດຕາມຕັນຫາຂອງຝ່າຍມະນຸດ
ທັມມະດາເຫມືອນຄົນເຫລົ່ານັ້ນ ຄືດຳເນີນໄປຕາມຄວາມປາຖນາຂອງຮ່າງກາຍແລະ
ຂອງຈິດໃຈ ຕາມສັນດານພວກເຮົາເປັນຄົນຄວນຖືກພຣະພິໂຣດເຫມືອນດັ່ງຄົນອື່ນ

ເອເຟໂຊ 4:17 ເຫດສັນນັ້ນ, ຂ້າພະເຈົ້າຈຶ່ງຂໍຍືນຍັນ ແລະເປັນພຍານໃນພຣະນາມຂອງ
ອົງພຣະຜູ້ເປັນເຈົ້າວ່າ ຕັ້ງແຕ່ນີ້ຕໍ່ໄປທ່ານທັງຫລາຍຢ່າດຳເນີນຊີວິດຕາມຢ່າງຄົນ
ຕ່າງຊາດທີ່ເຂົາດຳເນີນກັນນັ້ນ ຄືດ້ວຍໃຈໂງ່ອັນຫາປໂຍດບໍ່ໄດ້

ໂກໂລຊາຍ 1:21 ແລະເຈົ້າທັງຫລາຍ ຊຶ່ງເມື່ອກ່ອນນັ້ນບໍ່ແມ່ນພົລເມືອງຂອງພຣະເຈົ້າ
ແຕ່ເປັນສັດຕຣູທາງດ້ານຈິດໃຈດ້ວຍການຊົ່ວຮ້າຍຕ່າງໆ

ໂກໂລຊາຍ 2:18 ຢ່າໃຫ້ຜູ້ໃດໄດ້ສໍ້ໂກງເອົາຮາງວັນຂອງເຈົ້າທັງຫລາຍ ດ້ວຍໃຊ້ກິຣິຍາທຳ
ທ່າເປັນຜູ້ຖ່ອມຕົວວົ່ງ ໄຫວ້ເທວະດາແລະໄຜ່ຝັນຢູ່ໃນນິມິດທີ່ເຂົາເຫັນ ແລະອວດ
ອ້າງຕົວຂຶ້ນເປົ່າໆດ້ວຍຄວາມຄຶດຢ່າງທຳມະດາມະນຸດ

1 ເທຊະໂລນິກ 5:14 ຈົ່ງລະວັງໃຫ້ດີ ຢ່າໃຫ້ຜູ້ໃດເຮັດຊົ່ວຕອບແທນການຊົ່ວ ແຕ່ວ່າຈົ່ງສແວງຫາທາງເຮັດດີຕໍ່ກັນແລະກັນຢູ່ສເມີ ແລະຕໍ່ຄົນທັງປວງດ້ວຍ

2 ເທຊະໂລນິກ 2:2 ຢ່າໃຫ້ໃຈຂອງເຈົ້າທັງຫລາຍປັ່ນປ່ວນໂດຍງ່າຍ ຫລືສະທ້ານຕົກໃຈ ບໍ່ວ່າຈະມາດ້ວຍທາງວິນຍານ ຫລືມາທາງຄຳເວົ້າ ຫລືທາງຈົດຫມາຍທີ່ອ້າງວ່າມາຈາກເຮົາ ໂດຍອ້າງວ່າວັນຂອງອົງພຣະຜູ້ເປັນເຈົ້າມາເຖິງແລ້ວ

1 ຕິໂມທຽວ 6:5 ແລະການກະທົບກະເທືອນບໍ່ຂາດລະຫວ່າງຄົນໃຈທຸຈຣິດ ແລະຂາດຄວາມຈິງ ທີ່ຄິດວ່າການນັບຖືພຣະເຈົ້າຢ່າງຖືກຕ້ອງນັ້ນເປັນທາງທີ່ຈະໄດ້ກຳໄຣ

2 ຕິໂມທຽວ 3:8 ຢານເນສ ແລະຢຳເບຣສຂັດຂວາງຕໍ່ສູ້ກັບໂມເຊສັນໃດ ຄົນເຫລົ່ານີ້ກໍ່ຂັດຂວາງຕໍ່ສູ້ກັບຄວາມຈິງສັນນັ້ນເຫມືອນກັນ ເຂົາເປັນຄົນມີໃຈຊົ່ວຮ້າຍ ແລະໃນດ້ານຄວາມເຊື່ອນັ້ນເຂົາໃຊ້ບໍ່ໄດ້

ຕິໂຕ 1:15 ສຳລັບຄົນສະອາດນັ້ນ ທຸກສິ່ງກໍ່ສະອາດເສາະໃສ ແຕ່ວ່າສຳລັບຄົນຊົ່ວຮ້າຍ ແລະຄົນທີ່ບໍ່ເຊື່ອນັ້ນ ບໍ່ມີສິ່ງໃດສະອາດຈັກຢ່າງ ແຕ່ຈິດໃຈ ແລະໃຈສຳນຶກຜິດແລະຊອບຂອງເຂົາກໍ່ຖືກຊົ່ວຮ້າຍໄປແລ້ວ

ເຮັບເຣີ 12:3 ຈົ່ງພິຈາຣະນາຄິດເຖິງພຣະອົງ ຜູ້ຊົງອົດທົນການຂັດຂວາງຂອງຄົນບາບທີ່ຕໍ່ສູ້ພຣະອົງ ເພື່ອທ່ານທັງຫລາຍຈະບໍ່ຫມົດກຳລັງໃຈ

ຢາໂກໂບ 1:8 ເປັນຄົນສອງໃຈ ບໍ່ແນ່ນອນໃນບັນດາທາງຂອງຕົນ

Pastor T. John Franklin
Church of Salvation, Healing, and Deliverance
COS-HAD.org